# ບົດບັນທຶກການເຮັດວຽກ

**ລະຫວ່າງ ພະແນກສຶກສາທິການ ແລະ ກິລາ, ພະແນກການຕ່າງປະເທດ ແຂວງຫົວພັນ ສ ປປ ລາວ ກັບ ວິທະຍາໄລແພດສາດຮ່າຕິ່ງ, ວລ ວັດທະນາທຳ, ກິລາ ແລະ ທ່ອງທ່ຽວຫວຽນ ຢູ, ວລ ເຕັກນິກວິຊາຊີບ ແຂວງຮ່າຕິ່ງ ສສ ຫວຽດນາມ.**

---

ຕອນເຊົ້າຂອງວັນທີ 8 ພຶດສະພາ 2017 , ເວລາ 10 ໂມງ 00 ນາທີ, ຢູ່ທີ່ຫ້ອງປະຊຸມພະແນກສຶກສາທິການ ແລະ ກິລາ ແຂວງຫົວພັນ ສປປ ລາວ ໄດ້ຈັດຕັ້ງກອງປະຊຸມພົບປະແລກປ່ຽນ, ປຶກສາຫາລືກ່ຽວກັບແຜນການກໍ່ສ້າງຊັບພະຍາກອນມະນຸດ ໃນສົກປີ 2017-2018 ລະຫວ່າງພະແນກສຶກສາທິການ ແລະ ກິລາ, ພະແນກການຕ່າງປະເທດ ແຂວງຫົວພັນ ກັບ ບັນດາວິທະຍາໄລອ້ອມຂ້າງແຂວງຮ່າຕິ່ງ ສສ ຫວຽດນາມ.

## ❖ ຄະນະຜູ້ແທນຝ່າຍແຂວງຫົວພັນ ລວມມີ:

| | | | |
|---|---|---|---|
| 1. | ທ່ານ ເດນທະນູ ພຸດທະວົງສາ | ຮອງຫົວໜ້າພະແນກສຶກສາທິການ ແລະ ກິລາແຂວງ | ຫົວໜ້າຄະນະ |
| 2. | ທ່ານ ພູໄຊ ວິໄລທອງ | ຕາງໜ້າພະແນກການຕ່າງປະເທດ | ຮອງຄະ |
| 3. | ທ່ານ ເພັງຈັນ ແກ້ວດວງຄຳ | ຫົວໜ້າຂະແໜງອາຊີວະສຶກສາ | ຄະນະ |
| 4. | ທ່ານ ໝອນຄຳ ໄຊຍະເກດ | ຮອງຫົວໜ້າຂະແໜງ ບໍລິຫານ | ຄະນະ |
| 5. | ທ່ານ ອຳນວຍການໂຮງຮຽນ ມສ, ຂະແໜງການທີ່ກ່ຽວຂ້ອງ | | |

## ❖ ຝ່າຍແຂວງຮ່າຕິ່ງປະກອບມີ:

| | | | |
|---|---|---|---|
| 1. | ທ່ານ ຫງວຽນ ວັນ | ຮອງອຳນວຍການວິທະຍາໄລແພດສາດຮ່າຕິ່ງ | ຫົວໜ້າຄະນະ |
| 2. | ທ່ານ ນາງ ດັ້ງ ທີ້ ທຸ່ຍ ຮັງ | ຮອງອຳນວຍການວິທະຍາໄລ ວທ ກລ ທທ | ຄະນະ |
| 3. | ທ່ານ ນາງ ຫວຽນ ທີ້ ແທັງ ຍານ | ຮອງຫ/ໜຂະແໜງຄັດເລືອກນັກສຶກສາ ວລ ເຕັກນິກວິຊາຊີບ | ຄະນະ |
| 4. | ທ່ານ ເລ ຈອງ ຮຽນ | ວກ ພະແນກພົວພັນຕ່າງປະເທດ | ຄະນະ |

## ❖ ເນື້ອໃນເຮັດວຽກ:

1. **ສະຫຼຸບວຽກງານຮ່ວມມືລະຫວ່າງສອງຝ່າຍໃນປີ 2015 ແລະ ປີ 2016:**
2. ວິທະຍາໄລແພດສາດຮ່າຕິ່ງ ແຂວງຮ່າຕິ່ງ ສສ ຫວຽດນາມ ໄດ້ຮັບກໍ່ສ້າງນັກສຶກສາລາວຈຳນວນ 105 ນ້ອງ, ທີ່ຮຽນຈົບຊັ້ນມັດທະຍົມສຶກສາຕອນປາຍ (ມ7) ຂອງແຂວງຫົວພັນ ມາຮຽນພາສາຫວຽດ ແລະ ວິຊາສະເພາະຢູ່ໂຮງຮຽນ.
3. **ເນື້ອໃນຮ່ວມມືຜັນຂະຫຍາຍໃນປີ 2017 ແລະ ໃນຊຸມປີຕໍ່ໜ້າລະຫ່ວາງພະແນກ ສກຂ ຫົວພັນ ກັບບັນດາວິທະຍາໄລອ້ອມຂ້າງແຂວງຮ່າຕິ່ງ.**

3.1. ສືບຕໍ່ຜັນຂະຫຍາຍບົດບັນທຶກການຮ່ວມມືກໍ່ສ້າງທີ່ທັງສອງຝ່າຍໄດ້ລົງນາມຮ່ວມກັນ.

3.2. ສືບຕໍ່ກໍ່ສ້າງນັກສຶກສາຮຽນຈົບຊັ້ນມັດທະຍົມສຶກສາຕອນປາຍ (ມ7) ແຂວງຫົວພັນ ມາຮຽນພາສາຫວຽດ ແລະ ວິຊາສະເພາະຢູ່ບັນດາວິທະຍາໄລອ້ອມຂ້າງແຂວງຮ່າຕິ່ງ ສສ ຫວຽດນາມ;

3.3. ແຕ່ລະປີບັນດາວິທະຍາໄລອ້ອມຂ້າງແຂວງຮ່າຕິ່ງ ສສ ຫວຽດນາມຈະແຈ້ງການລະອຽດໃຫ້ພະແນກສຶກສາທິການ ແລະ ກິລາແຂວງຫົວພັນຊາບກ່ຽວກັບການຮັບກໍ່ສ້າງເປັນຕົ້ນແມ່ນຄ່າໃຊ້ຈ່າຍຕ່າງໆ.

3.4. ເນື້ອໃນລາຍລະອຽດການຮ່ວມມື ລະຫວ່າງ ສອງຝ່າຍຈະໄດ້ດໍາເນີນການລົງນາມບົດບັນທຶກຕາມທີ່ຫຼັງ.

ຫົວພັນ, ວັນທີ 08 ພຶດສະພາ 2017

ບົດບັນທຶກສະບັບນີ້ໄດ້ສ້າງເປັນ 04 ສະບັບ, ດ້ວຍພາສາລາວ ແລະ ພາສາຫວຽດນາມ,ແຕ່ລະຝ່າຍຮັກສາໄວ້ ຝ່າຍລະ 02 ສະບັບ, 01 ສະບັບ ພາສາລາວ ແລະ 01 ສະບັບພາສາຫວຽດນາມ ແຕ່ລະສະບັບລ້ວນແຕ່ມີຄຸນຄ່າເທົ່າທຽມກັນ.

| | |
|---|---|
| **ຕາງໜ້າພະແນກ ສກຂ ຫົວພັນ** | **ຕາງໜ້າ ບັນດາວິທະຍາໄລອ້ອມຂ້າງແຂວງຮ່າຕິ່ງ** |
| **ຮອງຫົວໜ້າພະແນກ** | **ຮອງອໍານວຍການວິທະຍາໄລແພດສາດ** |
| **ເຄນທະນູ ພຸດທະວົງສາ** | **ຫາງວຽນ ວັນ** |